ແຂວງຈຳປາສັກ (www.champasak-hotels.com) ຕັ້ງຢູ່ທາງພາກໃຕ້ຂອງປະເທດລາວ ເຊິ່ງມີຊາຍແດນຕິດກັບທິດຕາເວັນອອກຂອງປະເທດໄທ ແລະ ຕິດກັບທິດໃຕ້ຂອງປະເທດ ກຳປູເຈຍ. ມີຫລາຍສະຖານທີ່ທີ່ເປັນຈຸດເດັ່ນດຶງດູດນັກທ່ອງທ່ຽວ ເຊິ່ງລວມມີ ມໍລະດົກໂລກ (UNESCO) ວັດພູຈຳປາສັກ (http://www.champasak-hotels.com/destination_guide#_819948337) ເມື່ອເບິ່ງຍ້ອນຫລັງໄປໃນສັດຕະວັດທີ 16. ນ້ຳຕົກຄອນພະເພັງ ເປັນນ້ຳຕົກທີ່ໃຫຍ່ທີ່ສຸດໃນພາກຕາເວັນອອກສຽງໃຕ້ຂອງອາຊີ. ຄວາມສວຍງາມຂອງດອນ ສີ່ພັນດອນ, ເຊິ່ງເປັນບ່ອນຢູ່ຂອງ ປາໂລມານ້ຳຈືດທີ່ຫາຍາກແຕ່ສາມາດພົບເຫັນໄດ້, ທົ່ງພຽງບໍລະເວນ (http://www.champasak-hotels.com/Bolaven_Plateau_Insight_Tour_1_Day), ພ້ອມດ້ວຍນ້ຳຕົກຫລາຍແຫ່ງ ແລະ ສະຖານທີ່ເພາະປູກກາເຟ ທີ່ໃຫ້ຫມາກຜົນຈຳນວນຫນຶ່ງທີ່ດີທີ່ສຸດໃນໂລກ.

ກ່ອນທີ່ທ່ານຈະໄປຢ້ຽມຢາມແຂວງຈຳປາສັກ ຢາກໃຫ້ທ່ານທຳຄວາມຮູ້ຈັກກັບຄວາມອຸດົມສົມບູນທີ່ແຂວງຈຳປາສັກມີຢູ່ເຊັ່ນວ່າ: ທີ່ພັກເຊົາຫລາຍລະດັບ http://www.champasak-hotels.com/accommodation) ແລະ ລາຍການທ່ອງທ່ຽວຕ່າງໆ (http://www.champasak-hotels.com/tours), ພ້ອມດຽວກັນກັບສະຖານທີ່ດຶງດູດຄວາມສົນໃຈໃຫ້ໄປຢ້ຽມຢາມ (http://www.champasak-hotels.com/destination_guide).

ນັກທ່ອງທ່ຽວທີ່ມີຄວາມສົນໃຈກ່ຽວກັບໃນກິລາທາງນ້ຳ ຈະໄດ້ພົບກັບຄວາມມ່ວນຊື່ນກັບການທ່ອງທ່ຽວແບບ 4 ວັນ (http://www.champasak-hotels.com/Lost_in_Laos_4_Days) ທ່ອງທ່ຽວສູ່ພາກໃຕ້ຂອງປະເທດລາວ ທີ່ຈຳນຳພາທ່ານໄປສູ່ດິນແດນແມ່ນ້ຳຂອງດອນ ສີ່ພັນດອນ, ທີ່ເປັນບ່ອນລ່ອງເຮືອກາຢັກກິງ, ເຮືອແພ ແລະ ເຮືອຊົມວິວປະເພດອື່ນໆກໍ່ໄດ້ເຊັ່ນດຽວກັນ. ໂປຼແກຼມທົວ 4 ວັນ ແມ່ນຂີ່ລົດຖີບແບບປະຈົນໄພ  (http://www.champasak-hotels.com/Cycling_Advantures_4_Days) ທີ່ຈະນຳພາທ່ານສຳພັດເຖິງການດຳລົງຊີວິດຂອງຊາວບ້ານ ທີ່ນັກທ່ອງທ່ຽວທົ່ວໄປບໍ່ສາມາດສຳພັດໄດ້, ຫລືວ່າຈະໃຊ້ເວລາຫນຶ່ງວັນຢູ່ປາກເຊ ທີ່ເປັນເມືອງໃຫຍ່ໃນພາກໃຕ້ຂອງລາວ, ທີ່ມີຄວາມໂດ່ງດັງກ່ຽວກັບການຕ່ຳຜ້າຝ້າຍ ແລະ ຜ້າໄຫມ ດ້ວຍມື. ພວກເຮົາຮັບຮອງວ່າ ພວກທ່ານຈະໄດ້ມີໂອກາດຢ້ຽມຢາມຕະຫລາດທ້ອງຖິ່ນທີ່ມີສິນຄ້າຫລາກຫລາຍໃຫ້ທ່ານໄດ້ເລືອກ, ໂດຍສະເພາະແມ່ນ ຄວາມຫລາກຫລາຍສີສັນຂອງເສື້ອຜ້າ ພ້ອມດ້ວຍເຄື່ອງປະດັບຕ່າງໆ ແລະ ຜົນຜະລິດຂອງຄົນທ້ອງຖິ່ນ ເຊັ່ນ: ກາເຟ, ຊາ, ຜັກ ແລະ ຫມາກໄມ້.

ສຳລັບຜູ້ທີ່ຢາກຈະສຳພັດເຖິງປະຫວັດສາດອັນເກົ່າແກ່ຄື ວັດພູຈຳປາສັກທີ່ມີຄວາມເກົ່າແກ່ທີ່ສຸດ  ແລະ ເຊິ່ງຫ່າງຈາກຕົວເມືອງຈຳປາສັກ ທາງທິດຕາເວັນຕົກສຽງໃຕ້ພຽງແຕ່ 6 ກິໂລແມັດ, ໃນເຂດນີ້ເປັນທີ່ຮູ້ຈັກກັນດີ ຄືວັດທີ່ມີຮູບແບບຄືກັບວັດ ອຸ່ມໂຕະໂມະ ຂອງຂະແມ (http://www.champasak-

hotels.com/destination_guide#_819948509) ແລະ ຫໍພິພິດທະພັນຂອງ ດອນໂຂງ (http://www.hotels.com/destination_guide#819948858), ທີ່ເປັນດອນຢູ່ທາງໃຕ້ຂອງເມືອງຈຳປາສັກ ທີ່ມີຊາວບ້ານຢູ່ອາໄສເຮືອນໄມ້ທີ່ມີຄວາມເກົ່າແກ່ ແລະ ຊາວບ້ານໄດ້ດຳລົງຊີວິດມາເປັນເວລາມາ 100 ກວ່າປີ.

ທັງຫມົດເລົ່ານີ້ຈະເປັນໄປໄດ້ຜ່ານການເປີດເວບໄຊຂອງ www.champasak-hotels.com, ເປັນເປົ້າຫມາຍທີສີ່ ທີ່ whl.travel ເປີດຢູ່ປະເທດລາວ (ຕາມຫລັງ Luang Prabang [http://www.luang-prabang-hotels.com], Vang Vieng [http://www.vang-vieng-hotels.com] ແລະ Vientiane [http://www.vientiane-hotel-link.com]) ເຊິ່ງນັກທ່ອງທ່ຽວຈະພົບກັບທີມງານທີ່ມີຄວາມຊຳນານໃນພື້ນທີ່ຢ່າງມືອາຊີບ ຢູ່ບໍລິສັດ ທີມເວີກ (http://www.champasak-hotels.com/aboutus).

ທ່ານ ລີ ເຊີຣີດານ, ຜູ້ບໍລິຫານທົ່ວໄປຂອງບໍລິສັດ ທີມເວີກ ໄດ້ເວົ້າວ່າ: “ພວກເຮົາມີຄວາມພາກພູມໃຈນຳສະເຫນີພາກຈຳປາສັກ ແລະ ພວກເຮົາເຊື່ອວ່າ ເຂດຈຳປາສັກນີ້ຈະມີສິ່ງດີໆທີ່ໃຫ້ໂອກາດນັກທ່ອງທ່ຽວພົບພໍ້ກັບທຳມະຊາດ, ລວມກັບອີກສາມພາກທີ່ມີແລ້ວ ແລະ ຍັງມີອີກສອງພາກທີ່ກຳລັງດຳການຄືຫລວງນ້ຳທາ ແລະ ຊຽງຂວາງ, ພວກເຮົາມີຄວາມຍິນດີທີ່ສາມາດແບ່ງປັນທຸກພາກໃນລາວ ທີ່ພວກເຮົາຮັກໃຫ້ກັບຜູ້ຢ້ຽມຢາມ ຈາກທົ່ວໂລກ”